## ຜູ້ນຳເຮົາຕ້ອນຮັບທູດ ອາເມລິກາ ອຳລາ .



*(ຂປລ): ທ່ານ ທອງສິງ ທຳມະວົງ, ປະທານສະພາແຫ່ງຊາດ ແລະ ທ່ານ ບົວສອນ ບຸບຜາວັນ, ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ຕ່າງກໍໄດ້ໃຫ້ກຽດຕ້ອນ ຮັບ ການເຂົ້າຢ້ຽມຂໍ່ານັບອຳລາ ຂອງທ່ານ ຣາດວິກ ຣູໂຊ, ເອກອັກຄະລັດຖະທູດ ແຫ່ງ ສະຫະລັດອາເມລິກາ ປະຈຳລາວ ໃນວັນທີ 13 ສິງຫາ 2010 ນີ້ ພາຍຫລັງ ທີ່ ທ່ານໄດ້ສິ້ນສຸດການປະຕິບັດໜ້າທີ່ ການທູດຢູ່ ສປປ ລາວ. ໃນໂອກາດນີ້, ທ່ານ ປະທານສະພາແຫ່ງຊາດ ແລະ ທ່ານນາຍົກລັດຖະມົນຕີ ຕ່າງກໍໄດ້ສະແດງ ຄວາມຊົມເຊີຍ ແລະ ຕີລາຄາສູງ ຕໍ່ການປະຕິບັດ ໜ້າທີ່ການ ທູດ ຂອງທ່ານ ຣາດວິກ ຣູໂຊ ຊຶ່ງຕະຫລອດໄລຍະທີ່ທ່ານ ປະຕິບັດໜ້າທີ່ການທູດຢູ່ ສປປ ລາວ ທ່ານໄດ້ປະກອບສ່ວນສຳຄັນ ເຂົ້າໃນການເສີມຂະຫຍາຍ ສາຍ ພົວພັນມິດຕະພາບ ແລະ ການຮ່ວມມື ລະຫວ່າງສອງປະເທດ ລາວ ແລະ ສະຫະລັດອາເມລິກາ ໃຫ້ນັບມື້ນັບຂະຫຍາຍຕົວຍິ່ງໆຂຶ້ນ. ຜ່ານມາ ລັດຖະບານ ອາເມ ລິກາ ກໍໄດ້ເອົາໃຈໃສ່ໃຫ້ການຊ່ວຍທຶນຮອນ ເຂົ້າໃນການພັດທະນາໂຄ່ງລ່າງແກ່ລາວ ປະກອບສ່ວນ ສຳຄັນໃນການແກ້ໄຂຄວາມທຸກຍາກ ຂອງປະຊາຊົນລາວ ໃຫ້ນັບມື້ຫລຸດຜ່ອນລົງຕາມດຳລັບ. ພ້ອມທັງ ອວຍພອນໃຫ້ ທ່ານທູດອາເມລິກາ ຈົ່ງກັບຄືນປະເທດດ້ວຍຄວາມສະຫວັດດີພາບ ແລະປະສົບຜົນສຳ ເລັດໃນໜ້າທີ່ໃໝ່ອັນມີກຽດ ຂອງ ທ່ານ. ທ່ານ ຣາດວິກ ຣູໂຊ ກໍໄດ້ສະແດງຄວາມຂອບໃຈ ຕໍ່ການຕ້ອນຮັບອັນອົບອຸ່ນ ຂອງບັນດາທ່ານຜູ້ນຳ ລາວ ໃນຄັ້ງນີ້ ກໍຄື ບັນດາການນຳຂັ້ນສູງ ແລະ ພະນັກ ງານ ທີ່ກ່ຽວຂ້ອງຂອງລາວ ທີ່ໄດ້ໃຫ້ການຊ່ວຍເຫລືອ, ຮ່ວມມື ສະໜັບສະໜູນ ແລະ ອຳນວຍຄວາມສະດວກ ເຮັດໃຫ້ການປະຕິບັດໜ້າທີ່ ໃນຄັ້ງນີ້ ໄດ້ປະສົບຜົນສຳ ເລັດເປັນຢ່າງດີ./.